JDB

ທະນາຄານຮ່ວມພັດທະນາ
Joint Development Bank

ບົດລາຍງານປະຈຳປີ 2022

ANNUAL REPORT 2022

“ເຕີບໃຫຍ່ໄປພ້ອມກັນ”
“BLOOMING TOGETHER”

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ
Head Quarter Location

ອາຄານເລກທີ 82, ຖະໜົນ ລ້ານຊ້າງ, Building No 82, Lanexang Ave
ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, Ban Hatsadee, Chanthabouly District, Vientiane Capital
ຕູ້ໄປສະນີ P.O. Box 3187 ໂທລະສັບ Tel: 021 - 213 531, ສາຍດ່ວນ Hotline 1499 ໂທລະສານ Fax: 021 - 213 530
Website: www.jdbbank.com.la
E-mail: info@jdbbank.la



JDB
ທະນາຄານຮ່ວມພັດທະນາ
Joint Development Bank

" ເຕີບໃຫຍ່ໄປພ້ອມກັນ "

" BLOOMING TOGETHER "

ຄະນະອຳນວຍການ ທະນາຄານຮ່ວມພັດທະນາ

Board of Management of the Joint Development Bank

ສາລະບານ
CONTENT

1	ບົດຄວາມເຫັນຂອງ ປະທານສະພາຜູ້ບໍລິຫານ ທະນາຄານຮ່ວມພັດທະນາ (ທ່ານ ເອກະພັນ ພະພິທັກ) Speech of the Chairman of the Board of Director of Joint Development Bank (Mr. Ekaphan PHAPHITHAK)	5
2	ບົດຄວາມເຫັນຂອງ ຜູ້ອຳນວຍການໃຫ່ຍ ທະນາຄານຮ່ວມພັດທະນາ (ທ່ານ ວິໄລ ສີພະພອນ) Speech of the Managing Director of Joint Development Bank (Mr. Vilay SIPHAPHONE)	8
3	ສະພາບໍລິຫານ ທະນາຄານຮ່ວມພັດທະນາ Board of Directors of The Joint Development Bank	11
4	ຄະນະກຳມະການ ຄຸ້ມຄອງບໍລິຫານ Strategic & Governance Committee	12
5	ຄະນະກຳມະການກວດສອບ Internal Inspection Committee	13
6	ຄະນະກຳມະການ ບໍລິຫານຄວາມສ່ຽງ Risk Management CommitteeExecutive Board Committee	14
7	ຄະນະອຳນວຍການ ທະນາຄານຮ່ວມພັດທະນາ Board of Management of the Joint Development Bank	15
8	ໂຄງຮ່າງການຈັດຕັ້ງ ປະຈຳປີ 2022 Organization chart 2022	17
9	ບົດສະຫຼຸບການດຳເນີນທຸລະກິດ ປະຈຳປີ 2022 Business Operation Summary 2022	18
10	ວຽກງານເຄື່ອນໄຫວ ປະຈຳປີ 2022	27
11	ວຽກງານຊ່ວຍເຫຼືອສັງຄົມ Social Supporting Work	31
12	ຂໍ້ມູນດ້ານການເງິນໂດຍຫຍໍ້ Summary of Financial Infomation	33
13	ບົດລາຍງານຂອງນັກກວດສອບອິດສະຫຼະ Report of Independent Auditor (Laos and English)	34
14	ໜ່ວຍບໍລິການຕ່າງໆ Service Units	85

JDB
ທະນາຄານຮ່ວມພັດທະນາ
Joint Development Bank

" ຂ້າພະເຈົ້າ ໃນນາມ ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ຫຼື JDB ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາ ລູກຄ້າທຸກທ່ານ ທີ່ໄວ້ວາງใจ ใช้ບໍລິການ ທະນາຄານຮ່ວມພັດທະນາ ຕະຫຼອດມາ ແລະ ຜູ້ບໍລິຫານລະດັບສູງ ຕະຫຼອດເຖິງ ພະນັກງານທຸກຄົນ ທີ່ໄດ້ທຸ້ມເທແຮງກາຍ, ແຮງໃຈ ໃນການປະຕິບັດ ໜ້າທີ່ວຽກງານຂອງຕົນ ຢ່າງຫ້າວຫັນ."

ທ່ານ ເອກະພັນ ພະພິທັກ
MR. EKAPHAN PHAPHITHACK

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ
Chairman, Board of Directors
Joint Development Bank.

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ທ່ານ ເອກະພັນ ພະພິທັກ
MR. EKAPHAN PHAPHITHACK

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ
Chairman, Board of Directors Joint Development Bank.

ບົດປະກອບຄຳເຫັນ

Speech of Mr. Ekaphan PHAPHITHACK
Chairman, Board of Directors Joint Development Bank.

"ຂ້າພະເຈົ້າ ໃນນາມປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ຫຼື JDB ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງ ບັນດາລູກຄ້າທຸກທ່ານທີ່ໄວ້ວາງใจ ใช้ບໍລິການ ທະນາຄານຮ່ວມພັດທະນາຕະຫຼອດມາ ແລະ ຜູ້ບໍລິຫານ ລະດັບສູງ ຕະຫຼອດເຖິງ ພະນັກງານທຸກຄົນ ທີ່ໄດ້ທຸ້ມເທແຮງກາຍ, ແຮງใจในการปะติบัดหน้าที่ວຽກງານຂອງຕົນ ຢ່າງຫ້າວຫັນ."

"As the Chairman of the Board of Directors of Joint Development Bank or JDB, I would like to express my sincere gratitude to all customers for your trust in Joint Development Bank's services throughout the years and to our senior management officials and all employees for putting both physical and mental efforts in actively implementing your duties."

ໃນປີ 2022 ເຖິງວ່າສະພາບເສດຖະກິດຂອງໂລກ ມີການຜັນແປ ຢ່າງສັບສົນ , ມີສິ່ງຄາມການຄ້າລະຫວ່າງປະເທດມະຫາອຳນາດ,ໄພ ຂົ່ມຂູ່ທາງທຳມະຊາດ ແລະ ການລະບາດຂອງໄວລັດ ໂຄວິດ 19 (COVID 19)ມີສິ່ງຄາມຢູ່ໃນບາງພູມີພາກເຊິ່ງເປັນປັດໃຈເຮັດໃຫ້ ເສດຖະກິດຂອງໂລກມີການສະລໍຕົວ ແລະ ໄດ້ຮັບຜົນກະທົບພໍສົມ ຄວນ, ເຖິງຢ່າງໃດກໍຕາມຂ້າພະເຈົ້າກໍໄດ້ຕັດສິນໃຈສູງຫັນວິກິດໃຫ້ ເປັນໂອກາດເພື່ອບັນລຸຜົນສຳເລັດຮ່ວມກັນທະນາຄານຮ່ວມພັດທະ ນາສາມາດປະຕິບັດໄດ້ລື່ນຄາດໝາຍ ທີ່ຕັ້ງໄວ້ຢ່າງໜ້າເພິ່ງພໍໃຈ.

- ທະນາຄານໄດ້ການລະດົມທຶນທີ່ເປັນເງິນຝາກຈາກລູກຄ້າ, ບັນດາ ຫ້າງຮ້ານຕ່າງໆ ທັງບຸກຄົນ ແລະ ນິຕິບຸກຄົນ.
- ນຳໃຊ້ແຫຼ່ງທຶນຕ່າງໆ:ໄດ້ປ່ອຍສິນເຊື່ອເຂົ້າໃນການພັດທະນາເສດ ຖະກິດສັງຄົມກໍຄື ການກໍ່ສ້າງໂຄງລ່າງພື້ນຖານຂອງປະເທດໄດ້ສົ່ງ ເສີມການຜະລິດດ້ານກະສິກຳໃຫ້ເປັນສິນຄ້າ,ໃຫ້ສິນເຊື່ອແກ່ພະນັກ ງານ ແລະ ສິນເຊື່ອເພື່ອການສຶກສາ ແລະການຄືນກຳໄລໃຫ້ລູກຄ້າ ເຊິ່ງທັງໝົດນີ້ກໍ່ແມ່ນການກ້າຕັດສິນໃຈຂອງຜູ້ບໍລິຫານຂອງທະນາ ຄານຮ່ວມພັດທະນາເພື່ອສົ່ງເສີມເສດຖະກິດຂອງລາວໃຫ້ມີຄວາມ ເຂັ້ມແຂງເຮັດໃຫ້ລູກຄ້າມີຄວາມເຊື່ອໝັ້ນ ແລະ ໄວ້ວາງใจໃຫ້ການ ສະໜັບສະໜູນ ທະນາຄານ JDBຕະຫຼອດມາ.

In 2022, the global economy became more complex. There are trade wars amongst superpowers, natural disasters, a Covid-19 pandemic, and a war in certain regions. These led to slow growth in the global economy and left significant impacts. However, I have made a strong decision to turn a crisis into an opportunity for our joint achievements where JDB satisfactorily overachieved planned targets.

- The bank has mobilized deposits from customers: both natural person and legal entity depositors.
- Use of fund sources: In contribution to socio-economic development, JDB has financed infrastructure development projects, promoted commercial agriculture, provided loans to employed people, offered education loans, and given prizes to clients. All of these decisions are made possible by JDB's Management to promote a stronger economy of Lao PDR where we have gained our customers' confidence and trust as shown by their supports to JDB throughout the years.

ໃນປີ 2022 ເປັນປີທີ່ມີຄວາມທ້າທາຍຫຼາຍ ສຳລັບທະນາຄານ ຮ່ວມພັດທະນາ (JDB) ຂ້າພະເຈົ້າພ້ອມດ້ວຍຜູ້ບໍລິຫານທຸກລະ ດັບ ຕະຫຼອດເຖິງພະນັກງານທຸກຄົນ ຂໍສັນຍາວ່າ: ຂ້າພະເຈົ້າຈະບໍ ລິຫານ ແລະ ບໍລິການທາງດ້ານການເງິນທີ່ຄົບວົງຈອນໃຫ້ມີຄວາມ ທັນສະໄໝ, ມີຄວາມວ່ອງໄວ, ມີຄຸນນະພາບເພື່ອຕອບສະໜອງ ຄວາມຕ້ອງການຂອງກຸ່ມລູກຄ້າ ແລະ ໃສ່ໃຈການບໍລິການເປັນຫຼັກ ເພື່ອຍົກລະດັບຊື່ສຽງຂອງທະນາຄານ JDB ໃຫ້ໄດ້ມາດຕະຖານ ສາກົນເປັນທີ່ຍອມຮັບຂອງຄົນທົ່ວສັງຄົມທຸກລະດັບໃນຂົງເຂດອາ ຊ່ຽນ ແລະ ສາກົນ ເທື່ອລະກ້າວ ຕາມນະ�โยบายດັ່ງນີ້:

1. ຂ້າພະເຈົ້າຢາກໃຫ້ທະນາຄານຮ່ວມພັດທະນາ ຫຼື JDB ເປັນທະນາຄານທີ່ຢູ່ໃນແຖວໜ້າຂອງບັນດາທະນາຄານທຸລະກິດໃນ ລາວ ແລະ ສາກົນເທື່ອລະກ້າວ.
2. ພັດທະນາລະບົບ Digital Banking ເປັນທະນາຄານທີ່ທັນສະໄໝ ເພື່ອເຊື່ອມໂຍງທາງດ້ານການເງິນກັບສາກົນ ແລະ ພາກພື້ນ.
3. JDB ຕ້ອງພັດທະນາຕົນເອງ ໃຫ້ມີການເຊື່ອມຕໍ່ການຊຳລະສະສາງ ເປັນ HUການເງິນລະດັບໂລກສ້າງໃຫ້ເປັນສູນກາງການເຊື່ອມຕໍ່ ລະດັບອາຊຽນ ແລະ ລະດັບໂລກ. ພວກເຮົາຕ້ອງພັດທະນາໃນ 3 ນະ�โยบายນີ້ ໃຫ້ພັດທະນາໄປທາງໜ້າ ແລະທັນສະໄໝໃຫ້ໄດ້ ເລີ່ມປີ 2023 ເປັນຕົ້ນໄປເຮົາຕ້ອງພັດທະນາໃຫ້ເປັນທະນາຄານ ທີ່ເຮົາຢາກເປັນ. ທຸກທີມງານຕ້ອງໃຫ້ສຳເລັດນັບແຕ່ນີ້ເປັນຕົ້ນໄປ ເຮົາຕ້ອງເດີນຕາມນະ�โยบายຂອງເຮົາໃຫ້ໄດ້.

2022 was a very challenging year for JDB. I, and all management officials at all levels and employees, pledge that I will direct and provide a complete suite of financial services that are modern, swift, and quality to meet customers' needs and to focus on servers in order to enhance JDB's reputation and to gradually meet an international benchmark and to be accepted by the public at all levels and amongst ASEAN and an international community.

1. I wish Joint Development Bank or JDB to gradually become a leading commercial bank in Lao PDR and internationally.
2. Develop a digital banking system as a modern bank for global and regional financial integration.
3. JDB must develop itself to integrate into payment systems, become a global financial hub, and become an integration center of ASEAN and the globe. We must develop and implement these 3 policies for our growth and modernization starting from 2023 onwards so that we become the bank of our aspirations. Henceforth, every team must complete this mission and implement this new policy.

ທ້າຍສຸດນີ້ ຂ້າພະເຈົ້າຂໍອວຍໄຊໃຫ້ພອນ ແດ່ການນຳ ພັກ-ລັດ , ນັກທຸລະກິດ ພາຍໃນ ແລະ ຕ່າງປະເທດ , ລູກຄ້າ , ຜູ້ບໍລິຫານ ທຸກລະດັບ,ພະນັກງານທັງໝົດໃນທົ່ວປະເທດຈົ່ງມີສຸຂະພາບເຂັ້ມແຂງ, ມີອາຍຸຍືນຍາວມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ແລະ ມີຄວາມຜາສຸກໃນຊີວິດ ຂອງທ່ານ ຕະຫຼອດໄປ.

In closing, I wish our Party-State's leadership, domestic and foreign business people, customers, all levels of management officials, and all employees nationwide good health, longevity, and successes in your professional career and happiness in your personal endeavors.

ປະທານສະພາບໍລິຫານທະນາຄານຮ່ວມພັດທະນາ
ທ່ານ ເອກະພັນ ພະພິທັກ

Chairman, Board of Directors Joint Development Bank.

JDB
ທະນາຄານຮ່ວມພັດທະນາ
Joint Development Bank

" ປະຕິບັດຕາມນະໂຍບາຍ ແລະ ທິດຊີ້ນຳຂອງສະພາບໍລິຫານ ເພື່ອສືບຕໍ່ຫັນ JDB ໃຫ້ເປັນ ທະນາຄານທີ່ທັນສະໄໝ "

ທ່ານ ວິໄລ ສີພະພອນ
Mr. Vilay SIPHAPHONE

ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ.
Managing Director

ໂດຍປະຕິບັດຕາມນະໂຍບາຍ ແລະ ທິດຊີ້ນຳຂອງສະພາບໍລິຫານ ເພື່ອສືບຕໍ່ຫັນ JDB ໃຫ້ເປັນທະນາຄານທີ່ທັນສະໄໝ,ໃຫ້ເປັນ ທະນາຄານ Digital Banking ໄດ້ມາດຕະຖານສາກົນ ແລະ ປະສົບຜົນສຳເລັດ ດ້ານການບໍລິການທີ່ດີເລີດໃຫ້ແກ່ລູກຄ້າຂອງຕົນ ຕາມມາດຕະຖານ ISO 9001: 2015.

In compliance with the policies and directives from the Board of Directors in order to transform JDB into a digital banking entity that meets an international standard and achieves performance excellence in customer services per ISO 9001:2015.

ບົດຄຳເຫັນຂອງ ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ ປະຈຳປີ 2022

Preamble by Mr. Vilay Siphaphone
Managing Director, Joint Development Bank, 2022

ໃນສົກປີ 2022 ນີ້ກອງປະຊຸມຜູ້ຖືຮຸ້ນໄດ້ຕົກລົງປັບປຸງລະບົບກົງຈັກການຈັດຕັ້ງ ນັບແຕ່ຂັ້ນສະພາບໍລິຫານ ຄະນະຜູ້ບໍລິຫານຕະຫຼອດເຖິງພະນັກງານທຸກຖ້ວນໜ້າ,ເພື່ອປະຕິບັດຕາມແຜນຍຸດທະສາດ ແລະ ແຜນການດຳເນີນທຸລະກິດປະຈຳປີໃຫ້ປະກົດຜົນເປັນຈິງ ແລະ ເພື່ອບຸກທະລຸເປົ້າໝາຍຂອງການປະຕິບັດຕົວເລກ KPI ຂອງທຸກຂະແໜງການທຸລະກິດ ທີ່ສ້າງລາຍຮັບ ແລະ ຜົນກຳໄລແກ່ທະນາຄານ JDB.

In this 2022 fiscal year, the shareholders' meeting agreed to undertake an organizational restructuring from the Board of Directors to the Management and down to all employees as part of a successful implementation of a strategy and an annual business plan and to achieve KPIs in all profit-earning business lines for JDB.

ໃນສົກປີ 2022 ນີ້ ເຫັນວ່າທະນາຄານປະຕິບັດແຜນການໄດ້ລື່ນຄາດໝາຍທີ່ວາງໄວ້ຢ່າງກ້າວກະໂດດເປັນທີ່ເພິ່ງພໍໃຈຂອງຄະນະຜູ້ບໍລິຫານ ແລະ ພະນັກງານທຸກຄົນພາຍໃນທະນາຄານຮ່ວມພັດທະນາ ແລະ ເປັນການສ້າງຜົນງານເພື່ອຕ້ອນຮັບວັນສ້າງຕັ້ງທະນາຄານຮ່ວມພັດທະນາ ຄົບຮອບ 33 ປີ (ແຕ່ວັນທີ 3 ຕຸລາ 1989 – 3 ຕຸລາ 2022).

In this 2022 fiscal year, JBD overachieved its targets that are satisfactory to all JDB's Management and employees, as well as to welcome the 33rd Anniversary of JDB's establishment
(from October 3rd, 1989 – October 3rd, 2022).

ປະຈຸບັນທະນາຄານຮ່ວມພັດທະນາ JDມີໜ່ວຍບໍລິການທັງໝົດ 65 ຈຸດບໍລິການທົ່ວປະເທດ ແລະ ມີແຜນຂະຫຍາຍ ຕາໜ່າງການບໍລິການອີກ ສູ່ເຂດຊຸມຊົນເສດຖະກິດ ເພື່ອບໍລິການລູກຄ້າຂອງຕົນໃຫ້ທົ່ວເຖິງ ສ້າງຄວາມສະດວກສະບາຍ ແລະ ຕອບສະໜອງຄວາມຕ້ອງການຂອງສັງຄົມເຊັ່ນ: ການຮັບຝາກ ແລະ ເບີກຖອນເງິນສົດ, ການໂອນຊຳລະສະສາງພາຍໃນ ແລະ ຕ່າງປະເທດ.

At present, Joint Development Bank or JDB has 65 service units nationwide and plans to expand its service coverage to economically active communities to ensure financial inclusion, such as cash deposit and withdrawal, and domestic and international payment transfers.

ດ້ານສິນເຊື່ອ: ໄດ້ປ່ອຍສິນເຊື່ອເພື່ອຊຸກຍູ້ສົ່ງເສີມທຸລະກິດລູກຄ້າລາຍໃຫຍ່, ໂຄງການກໍ່ສ້າງຕ່າງໆ ທີ່ຕິດພັນກັບໂຄງການຂອງລັດຖະບານ, ສົ່ງເສີມຜູ້ປະກອບການ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME). ນອກຈາກນັ້ນຍັງມີສິນເຊື່ອນະໂຍບາຍຫັນຊັບເປັນທຶນ ແລະ ນະໂຍບາຍສິນເຊື່ອໃຫ້ແກ່ພະນັກງານ, ລັດຖະກອນ, ກຳມະກອນ ຕາມໂຮງຈັກໂຮງງານຕ່າງໆ ໂດຍບໍ່ມີຫຼັກຊັບຄ້ຳປະກັນສຳຫຼັບຜູ້ມີລາຍຮັບເບີກຈ່າຍເງິນເດືອນຜ່ານບັນຊີຂອງທະນາຄານ JDB ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ພ້ອມດຽວກັນນີ້ ທະນາຄານຮ່ວມພັດທະນາຍັງປ່ອຍສິນເຊື່ອ ເຂົ້າໃນໂຄງການບຸລິມະສິດຕ່າງໆເຊັ່ນ: ໂຄງການເຂື່ອນໄຟຟ້າ ແລະໂຄງການຂອງລັດທີ່ຕິດພັນກັບພັນທະບັດທີ່ເປັນງົບປະມານຂອງລັດຖະບານ.

Regarding credits, JDB has provided credits for corporate clients, government infrastructure projects, and promote small and medium enterprise (SME) business-owners . Moreover, JDB also has asset-based lending , specific civil servant credit loans, and payroll credit loans (for factory workers) products without asset collaterals for those whose payrolls are processed with JDB and BCEL. Meanwhile, JDB also provides credits to various prioritized projects, such as hydropower dam projects and relevant government projects financed by government bonds.

ຂ້າພະເຈົ້າຂໍຕາງໜ້າໃຫ້ແກ່ຄະນະຜູ້ບໍລິຫານ ພ້ອມດ້ວຍພະນັກງານທຸກຄົນ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ ຂໍອວຍພອນໄຊອັນປະເສີດ ໃຫ້ແກ່ລູກຄ້າທີ່ມາໃຊ້ບໍລິການທຸກໆທ່ານ ຈົ່ງປະສົບຜົນສຳເລັດຕໍ່ໜ້າທີ່ການງານຂອງທ່ານ ປາສະຈາກພະຍາດໂລຄາ ແລະ ສຸຂະພາບແຂງແຮງດີ.

On behalf of the Management and all employees, I would like to express my sincere appreciation and gratitude to all customers and wish you all success and good health.

ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ
Managing Director Joint Development Bank

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ສະພາບໍລິຫານ ທະນາຄານຮ່ວມພັດທະນາ

Board of Directors of The Joint Development Bank

ສະພາບໍລິຫານ ທະນາຄານຮ່ວມພັດທະນາ
Board of Directors of The Joint Development Bank

ທ່ານ ເອກະພັນ ພະພິທັກ
Mr. Ekaphan PHAPHITHACK
ປະທານສະພາບໍລິຫານ
Chairman of The Board of Directors

ທ່ານ ສູນທອນ ຈັນທະວົງ
Mr. Sounthorn CHANHTHAVONG
ຮອງປະທານ ສະພາບໍລິຫານ
Vice Chairman of Board of Directors

ທ່ານ. ວິໄລ ສີພະພອນ
Mr. Vilay SIPHAPHONE
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
Mr. Bounsavang PHILASAYPHITHAK
ສະມາຊິກ ສະພາບໍລິຫານ
Executive Board Member

ສະພາບໍລິຫານ ທະນາຄານຮ່ວມພັດທະນາ
Board of Directors of The Joint Development Bank

ທ່ານ ນາງ ພອນສະໄໝ ສຸກຂະຜົນ
Ms. Phonesamay SOUKHAPHON
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ປອ. ບົວວອນ ຈັນທະນີເລີດ
Mr.PhD. Bouavone CHANTHANILEUTH
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ຄຳສິງ ສອນສິນນະວົງ
Mr. Khamsing SONESINNAVONG
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone YORPHANXAY
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ບຸນຊຸ່ມ ສີສະຫວັດ
Mr. Bounsoum SISAVAT
ສະມາຊິກ ສະພາບໍລິຫານ ຈາກພາຍນອກ
External Executive Board Member

ຄະນະກຳມະການ ຄຸ້ມຄອງບໍລິຫານ
Strategic & Governance Committee

ທ່ານ ສູນທອນ ຈັນທະວົງ
Mr. Sounthorn CHANHTHAVONG
ປະທານ ຄະນະກຳມະການ
Head of Committee

ທ່ານ ປອ. ບົວວອນ ຈັນທະນິເລີດ
Mr.PhD. Bouavone CHANTHANILEUTH
ຮອງປະທານ
Deputy Head of Committee

ທ່ານ ວິໄລ ສີພະພອນ
Mr. Vilay SIPHAPHONE
ກຳມະການ
Committee's Member

ທ່ານ ຄຳຊຸ ຢ່າງ
Mr. Khamsu YANG
ກຳມະການ
Committee's Member

ທ່ານ ໄຊ ບຸລົມມະວົງ
Mr. Xay BOULOMMAVONG
ກຳມະການ
Committee's Member

ຄະນະກຳມະການກວດສອບ
Internal Inspection Committee

ທ່ານ ບຸນຂຸ່ມ ສີສະຫວັດ
Mr.Bounsoum SISAVAT
ປະທານ ຄະນະກຳມະການ
Head of Committee

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
Mr.Bounsavang PHILASAYPHITAK
ຮອງປະທານ
Deputy Head of Committee

ທ່ານ ປອ. ບົວວອນ ຈັນທະນິເລີດ
Mr.PhD. Bouavone CHANTHANILEUTH
ກຳມະການ
Committee's member

ທ່ານ ພູໄຊຊະນະ ໄຊສົມບັດ
Mr. Phuxayxana XAYSOMBATH
ກຳມະການ
Committee's member

ທ່ານ ວິສູດ ບົວສີສະອາດ
Mr. Visoud BOUASISAARD
ກຳມະການ
Committee's member

ທ່ານ ນາງ ສຸດທິດາ ທຳມະວົງ
Ms. Southtida THAMMAVONG
ກຳມະການ
Committee's member

ທ່ານ ວິຊາ ແກ້ວມະນີວົງ
Mr. Visa KEOMANIVONG
ກຳມະການ
Committee's member

ຄະນະກຳມະການ ບໍລິຫານຄວາມສ່ຽງ
Risk Management Committee

ທ່ານ ນາງ ພອນສະໄໝ ສຸກຂະຜົນ
Ms. Phonesamay SOUKHAPHON
ປະທານ ຄະນະກຳມະການ
Head of Committee

ທ່ານ ອານົນ ລ້ຽວແຄງ
Mr. Arnon RIEWRAENG
ຮອງປະທານ
Deputy Head of Committee

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
Mr.Bounsavang PHILASAYPHITAK
ກຳມະການ
Committee Member

ທ່ານ ວິໄລ ສີພະພອນ
Mr. Vilay SIPHAPHONE
ກຳມະການ
Committee Member

ທ່ານ ວັນໄຊ ວົງລາ
Mr. Vanxay VONGLA
ກຳມະການ
Committee Member

ທ່ານ ໄຊຊະນະ ທຳມະວົງສອນ
Mr. Xayxana THAMMAVONGSONE
ກຳມະການ
Committee Member

ຄະນະອຳນວຍການ ທະນາຄານຮ່ວມພັດທະນາ
Board of Management of the Joint Development Bank

ທ່ານ. ວິໄລ ສີພະພອນ
Mr. Vilay SIPHAPHONE
ຜູ້ອຳນວຍການໃຫຍ່
Managing Director

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone YORPHANXAY
ຮອງອຳນວຍການ
Deputy Director

ທ່ານ ຄຳສິງ ສອນສິນນະວົງ
Mr. Khamsing SONESINNAVONG
ຮອງອຳນວຍການ
Deputy Director

ທ່ານ ນາງ ພອນສະໄໝ ສຸກຂະພົນ
Ms. Phonesamay SOUKHAPHON
ຮອງອຳນວຍການ
Deputy Director

ທ່ານ ຄຳຊູ ຢ່າງ
Mr. Khamsu YANG
ຮອງອຳນວຍການ
Deputy Director

ທ່ານ ຈັນຊະນະ ສິງຫາວົງ
Mr.Chansana SINGHAVONG
ຮອງອຳນວຍການ
Deputy Director

ທ່ານ ວິລັນເດດ ໄວຍະສົມສັກ
Mr. Vilandeth VAYASOMSACK
ຮອງອຳນວຍການ
Deputy Director

ໂຄງຮ່າງການຈັດຕັ້ງ
Organization chart 2022



I ສະພາບລວມ | OVERVIEW

ໃນຂະນະທີ່ບັນດາຂະແໜງການເສດຖະກິດ ໃນ ສປປ ລາວ ກຳລັງເລີ່ມຄ່ອຍຟື້ນຕົວ ຍ້ອນການຜ່ອນຄາຍມາດຕະການຄວບຄຸມການລະບາດຂອງພະຍາດ COVID-19, ສປປ ລາວ ທີ່ໄດ້ປະເຊີນກັບບັນຫາຄວາມບໍ່ສົມດຸນທາງດ້ານເສດຖະກິດມະຫາພາກທີ່ແກ່ຍາວມາດົນກ່ອນການລະບາດ, ອີງຕາມຂໍ້ມູນຫລ້າສຸດຈາກບົດລາຍງານຂອງທະນາຄານໂລກກ່ຽວກັບເສດຖະກິດຂອງ ສປປ ລາວ.

ການເພີ່ມສູງຂຶ້ນ ຂອງລະດັບໜີ້ສິນສາທາລະນະ ແລະ ລາຄາສິນຄ້າໃນຕະຫລາດໂລກກໍມີລາຄາສູງຂຶ້ນ ກໍ່ໃຫ້ເກີດຄວາມສ່ຽງ ຕໍ່ສະເຖຍລະພາບດ້ານເສດຖະກິດມະຫາພາກ ແລະ ກະທົບຕໍ່ມາດຕະຖານການດຳລົງຊີວິດຂອງປະຊາຊົນ, ອີງຕາມຂໍ້ມູນ ຈາກບົດລາຍງານ ເສດຖະກິດ ຂອງ ສປປ ລາວ - ການຟື້ນຟູສະຖຽນລະພາບຂອງເສດຖະກິດມະຫາພາກ ເພື່ອສະໜັບສະໜູນການຟື້ນຕົວ (Lao PDR Economic Monitor - Restoring Macroeconomic Stability to Support Recovery).

ເສດຖະກິດ ຂອງ ສປປ ລາວ ຄາດວ່າຈະເຕີບໂຕ ໃນ ອັດຕາ 3.8 ເປີເຊັນ ໃນປີ 2022, ເພີ່ມຂຶ້ນ ຈາກ 2.5 ເປີເຊັນ ໃນປີ 2021 ບົນພື້ນຖານຄາດວ່າ ການເຈລະຈາໜີ້ສິນຈະມີ ຄວາມຄືບໜ້າທີ່ດີ ແລະ ຈະບໍ່ມີການລ່ອກດາວ ຫລື ນຳໃຊ້ມາດ ຕະການປ້ອງກັນ ແລະ ຄວບຄຸມຢ່າງເຄັ່ງຄັດຮອບໃໝ່ ເພື່ອສະ ກັດກັ້ນການແຜ່ລະບາດ ຂອງພະຍາດ COVID-19. ປະຈຸບັນ

While sectors of the Lao economy are beginning to recover from the slowdown caused by COVID-19, the country faces stiff challenges associated with long-standing macroeconomic vulnerabilities, according to the World Bank's latest economic update for the Lao People's Democratic Republic.

Increasing public debt levels and rising global prices are endangering macroeconomic stability and threatening living standards, according to Lao PDR Economic Monitor - Restoring Macroeconomic Stability to Support Recovery.

Laos' economy is forecast to grow by 3.8 percent in 2022, up from an estimated 2.5 percent in 2021, provided that ongoing debt renegotiations are successful and that strict COVID-19 containment measures do not return. The country currently enjoys a trade surplus and continues to attract foreign investment. The energy and mining sectors have been buoyant, while agricultural

ສປປ ລາວ ມີການເຕີບໂຕດ້ານການຄ້າ ແລະ ສືບຕໍ່ດຶງດູດການລົງທຶນຈາກຕ່າງປະເທດ. ຂະແໜງພະລັງງານ ແລະ ບໍ່ແຮ່ມີທ່າແຮງໃນການຂະຫຍາຍຕົວ, ໃນຂະນະທີ່ການສົ່ງອອກສິນຄ້າກະສິກຳ ແລະ ຜະລິດຕະພັນປຸງແຕ່ງ ແມ່ນໄດ້ຮັບແຮງໜູນຈາກຄວາມຕ້ອງການສິນຄ້າຈາກຕ່າງປະເທດ ແລະ ລາຄາສິນຄ້າທີ່ສູງຂຶ້ນ. ຂະແໜງບໍລິການຄາດວ່າຈະມີການຟື້ນຕົວເທື່ອລະກ້າວ.

ເຖິງແນວໃດກໍຕາມ, ອັດຕາເງິນເຟີ້ເພີ່ມສູງຂຶ້ນເຖິງ 9.9 ເປີເຊັນ ໃນເດືອນ ເມສາ 2022, ຈາກ 2 ເປີເຊັນໃນປີກາຍ, ພ້ອມດຽວກັນນີ້ ການແຜ່ລະບາດຂອງພະຍາດ COVID-19 ກໍໄດ້ເຮັດໃຫ້ຫລາຍທຸລະກິດປິດກິດຈະການລົງ ແລະ ເຮັດໃຫ້ສູນເສຍວຽກເຮັດງານທຳ ແລະ ສ້າງຜົນກະທົບຕໍ່ລາຍຮັບຂອງຄົວເຮືອນ. ການເພີ່ມຂຶ້ນຂອງລາຄາສິນຄ້າ ໃນຂະນະທີ່ລາຍຮັບພາກຄົວເຮືອນຫລຸດລົງ ໄດ້ເຮັດໃຫ້ຫລາຍຄອບຄົວທີ່ມີລາຍຮັບຕ່ຳ ປະເຊີນກັບຄວາມສ່ຽງທີ່ຈະກາຍເປັນຄອບຄົວທຸກຍາກ, ໂດຍສະເພາະຜູ້ຢູ່ໃນຕົວເມືອງ.

"ບັນຫາຕ່າງໆ ທີ່ເກີດຍ້ອນການປິດປະເທດທີ່ຕໍ່ເນື່ອງກັນເປັນເວລາ 2 ປີ ແລະ ມາດຕະການຈຳກັດຕ່າງໆ ເພື່ອສະກັດກັ້ນພະຍາດລະບາດ COVID-19 ແມ່ນ ເພີ່ມທະວີຄວາມຮຸນແຮງຂຶ້ນຍ້ອນຜົນກະທົບຈາກການເພີ່ມຂຶ້ນຂອງລາຄາສິນຄ້າ, ໂດຍສະເພາະ ນ້ຳມັນ ແລະ ອາຫານ, ສ່ວນໜຶ່ງ ແມ່ນຍ້ອນສົງຄາມ ໃນປະເທດ ອູແກຼນ ແລະ ການອ່ອນຄ່າຂອງເງິນກີບຢ່າງໄວວາ," ຄຳກ່າວ ຂອງ **ທ່ານ ອາເລັກ ເຄຼເມີ, ຜູ້ຕາງໜ້າຫ້ອງການທະນາຄານໂລກ ປະຈຳ ສປປ ລາວ.**

" ສະພາບການໃນ ສປປ ລາວ ຍິ່ງທ້າທາຍເປັນພິເສດເນື່ອງຈາກບັນຫາຫນີ້ສິນສາທາລະນະ ແລະ ການເກັບລາຍຮັບທີ່ຍັງບໍ່ໄດ້ຕາມແຜນການທີ່ຕັ້ງໄວ້. ດັ່ງນັ້ນບູລິມະສິດແມ່ນຄວນເລັ່ງໃສ່ການເກັບລາຍຮັບ ໂດຍການທົບທວນຄືນນະ�โยบายການຍົກເວັ້ນພາສີອາກອນໃນໂຄງການລົງທຶນ."

and manufacturing exports are supported by strong external demand and higher commodity prices. A gradual recovery is also expected in domestic services.

However, inflation reached 9.9 percent in April 2022, up from under 2 percent last year, while long-term job losses and business closures caused by the spread of COVID-19 continue to put pressure on household incomes. With prices rising, many low-income families are at risk of falling into poverty, especially in cities.

"Problems caused by two years of lockdowns and restrictions for COVID-19 are now being compounded by rising prices, especially for fuel and food, partly because of the war in Ukraine and the rapid depreciation of the kip," said **World Bank Country Manager for Lao PDR Alex Kremer.** "For Laos, because of debt and poor revenue collection, the situation is particularly challenging as there is not much room for financial maneuver. However, there are short and long-term ways of easing the situation, most importantly by restoring macroeconomic stability."

Public debt levels have increased considerably since 2019, increasing to 88 percent of GDP in 2021, with the energy sector accounting for over 30 percent of the debt stock. Foreign currency reserves remain low.

ລະດັບຂອງໜີ້ສິນສາທາລະນະ ເພີ່ມຂຶ້ນສູງສົມຄວນນັບແຕ່ ປີ 2019, ຊຶ່ງຄາດວ່າຢູ່ໃນລະດັບ 88 ເປີເຊັນ ຂອງ GDP ໃນປີ 2021, ຊຶ່ງໃນນັ້ນ ຂະແໜງພະລັງງານແມ່ນປະກອບສ່ວນສູງກວ່າ 30% ຂອງຍອດໜີ້ສິນສະສົມທັງໝົດ. ຄັງສຳຮອງເງິນຕາຕ່າງປະເທດຍັງຕ່ຳ.

ເພື່ອຟື້ນຟູສະຖຽນລະພາບຂອງເສດຖະກິດມະຫາພາກ ບົດລາຍງານໄດ້ມີຂໍ້ແນະນຳດ້ານນະ�โยบายโดยสะเพาะ ການເພີ່ມການເກັບລາຍຮັບ ແລະ ເພີ່ມປະສິດທິຜົນດ້ານລາຍຈ່າຍ. ນອກຈາກນັ້ນ ວຽກງານການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງໜີ້ສິນ ແລະ ປັບປຸງຄວາມໂປ່ງໃສ, ການປັບປຸງສະເຖຍລະພາບຂອງຂະແໜງການເງິນໂດຍນຳໃຊ້ເຄື່ອງມືດ້ານນິຕິກຳ ກົດລະບຽບ ແລະ ນຳໃຊ້ນະ�โยบายช่วยเงินอุดหนุนย่างมีจุดสุมแก่กุ่มคืนที่ทุกยาก.

The report recommends restoring macroeconomic stability as a top priority, chiefly by increasing both revenue collection and spending efficiency. The country also needs to strengthen debt management and transparency, and improve the stability of the financial sector through legal and regulatory tools and provide specific cash transfer policy to the poor.

This report also looks at Laos' gradual transformation from a land-locked to a land-linked country through infrastructure development and suggests several reforms that could reduce the risks and maximize the benefits of the large investments being made in roads, rail, and logistics parks. These reforms include building connecting roads to ensure that farmers and businesses can access new infrastructure, making border crossings more efficient, and improving the business environment to attract investment and generate jobs. Lao PDR should also promote sectors where it has a comparative advantage, for example, in high-value-added manufacturing goods, agricultural products, and nature-based tourism.

ບົດລາຍງານສະບັບນີ້ ຍັງໄດ້ວິເຄາະກ່ຽວກັບການຫັນປ່ຽນຂອງ ສປປ ລາວ ຈາກການເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ມາເປັນປະເທດທີ່ເຊື່ອມຕໍ່ ໂດຍການພັດທະນາພື້ນຖານໂຄງລ່ານ ແລະ ສະເໜີການປະຕິຮູບຫຼາຍດ້ານເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ສ້າງຜົນປະໂຫຍດສູງສຸດ ຈາກການລົງທຶນຂະໜາດໃຫ່ຍໃສ່ຖະໜົນຫົນທາງ, ທາງລົດໄຟ ແລະນິຄົມໂລຈິສຕິກ. ຂໍ້ແນະນຳໃນການປະຕິຮູບດັ່ງກ່າວກໍໄດ້ກວມເອົາຂໍ້ແນະນຳໃນການສ້າງລະບົບເສັ້ນທາງເຊື່ອມຕໍ່ເພື່ອຮັບປະກັນວ່າຊາວກະສິກອນ ແລະ ນັກ ທຸລະກິດ ສາມາດເຂົ້າເຖິງພື້ນຖານໂຄງລ່ານໄດ້, ປັບປຸງປະສິດທິຜົນຂອງຂັ້ນຕອນຢູ່ດ່ານຊາຍແດນ, ພ້ອມທັງ ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ເພື່ອດຶງດູດການລົງທຶນ ແລະ ສ້າງວຽກເຮັດງານທຳ.

ສປປ ລາວ ຍັງຄວນສົ່ງເສີມຂະແໜງການທີ່ມີຄວາມໄດ້ປຽບ ເຊັ່ນ: ຜະລິດຕະພັນປຸງແຕ່ງທີ່ມີມູນຄ່າເພີ່ມສູງ,ສິນຄ້າກະສິກຳ ຜະລິດຕະພັນກະສິກຳ ແລະ ການທ່ອງທ່ຽວທຳມະຊາດ.

Even though the Lao Economy recovered at the start of 2022, Lao PDR continues to face issues and challenges from a strong depreciation of Lao Kip and high inflation. The Lao PDR Economic Monitor: Tackling Macroeconomic Vulnerabilities report for October 2022 also indicates that bold reforms will help the country to restore economic stability and sustainable growth.

ເຖິງແມ່ນວ່າເສດຖະກິດຂອງລາວ ຈະມີການຟື້ນຕົວ ໃນຊ່ວງໄລຍະຕົ້ນປີ 2022, ແຕ່ ສປປ ລາວ ກໍຍັງປະເຊີນກັບ ບັນຫາ ແລະ ຄວາມທ້າທາຍຫຼາຍຂຶ້ນຈາກການອ່ອນຄ່າຂອງເງິນ ກີບ ແລະ ອັດຕາເງິນເຟີ້ທີ່ສູງ.

ບົດລາຍງານຕິດຕາມສະພາບເສດຖະກິດ ສະບັບເດືອນຕຸລາ 2022: ການຮັບມືກັບຄວາມບອບບາງດ້ານເສດຖະກິດມະຫາພາກ,ໄດ້ລະບຸວ່າ: ຂອດການປະຕິຮູບເປັນສິ່ງສຳຄັນ ທີ່ຈະຊ່ວຍ ປະເທດຟື້ນຟູສະເຖຍລະພາບ ທາງດ້ານເສດຖະກິດ ແລະ ຮັກ ສາການເຕີບໂຕທີ່ຍືນຍົງ.

ບົດລາຍງານຊີ້ແຈງວ່າເງິນກີບໄດ້ອ່ອນຄ່າລົງ 68% ເມື່ອທຽບກັບເງິນໂດລາສະຫະລັດ ໃນຊ່ວງປີນີ້ຈົນມາຮອດ ເດືອນ ຕຸລາ ອັນໄດ້ທ່ວງດຶງການຟື້ນຕົວຂອງເສດຖະກິດ ແລະ ເຮັດໃຫ້ອັດຕາເງິນເຟີ້ຂຶ້ນສູງ ແລ້ວນຳໄປສູ່ການຫົດຕົວ ດ້ານການບໍລິໂພກຂອງພາກເອກະຊົນຄົວເຮືອນ ແລະ ການ ລົງທຶນ,ໃນຂະນະດຽວກັນ, ຄາດວ່າໜີ້ສິນພາກລັດ ແລະ ໜີ້ ສິນທີ່ລັດຄ້ຳປະກັນຈະກາຍ 100% ຂອງ GDP ໃນທ້າຍປີ ນີ້ທະນາຄານໂລກໄດ້ຫລຸດອັດຕາການເຕີບໂຕຂອງເສດຖະກິ ດທີ່ຄາດຄະເນໄວ້ສຳລັບ ສປປ ລາວ ລົງມາເປັນ 2,5%, ຫລຸດລົງຈາກອັດຕາຄາດຄະເນໃນກ່ອນໜ້ານີ້ຢູ່ທີ່ 3,8 %.

The report indicates that the strong depreciation of the Lao kip, 68 percent against the US dollar in the year to October 2022, has undermined the recovery and has fueled inflation which is haring private consumption and investment. Meanwhile, public and publicly guaranteed debt is projected to increase to over 100 percent of GDP by the end of the year. The World Bank has lowered its economic growth forecast for 2022 to 2.5%, down from an earlier projection of 3,8%.

Although employment had risen by mid-2022, earnings did not keep pace with inflation. Year-on-year consumer price inflation had risen to 37 percent by October 2022, with food price inflation at almost 39 percent. This particularly affects the urban poor, with some families forced to reduce their consumption

ເຖິງແມ່ນວ່າການຈ້າງງານຈະເພີ່ມຂຶ້ນມາຮອດກາງປີ 2022, ແຕ່ລາຍໄດ້ຂອງປະຊາຊົນ ກໍຍັງເຕີບໂຕຊ້າເມື່ອທຽບກັບ ອັດຕາເງິນເຟີ້ທີ່ເພີ່ມຂຶ້ນ. ອັດຕາເງິນເຟີ້ຂອງໝວດສິນຄ້າບໍລິໂພກ ປີຕໍ່ປີໄດ້ເພີ່ມຂຶ້ນເຖິງ 37% ມາຮອດເດືອນ ຕຸລາ 2022, ໂດຍສະເພາະອັດຕາເງິນເຟີ້ ສຳລັບໝວດອາຫານທະລຸເກືອບຮອດ 39% ເຊິ່ງສົ່ງຜົນກະທົບຢ່າງຫຼວງຫຼາຍ ຕໍ່ຜູ້ທຸກຍາກໃນເຂດຕົວເມືອງ ຊຶ່ງບາງຄອບຄົວຕ້ອງໄດ້ຫລຸດຜ່ອນການບໍລິໂພກສະບຽງອາຫານ ແລະ ການຊົມໃຊ້ນ້ຳມັນເຊື້ອໄຟ. ໃນການສຳຫຼວດ ຂອງທະນາຄານໂລກ, ໄດ້ມີການລາຍງານວ່າ ສອງສ່ວນສາມຂອງຄົວເຮືອນ ໄດ້ຫລຸດຄ່າໃຊ້ຈ່າຍດ້ານສຸຂະພາບ ແລະ ການສຶກສາ ເຊິ່ງອາດມີຜົນກະທົບຕໍ່ການພັດທະນາຊັບພະຍາກອນມະນຸດ ໃນໄລຍະຍາວ.

" ທະນາຄານໂລກ ແລະ ຄູ່ຮ່ວມພັດທະນາອື່ນໆໄດ້ມີການປຶກສາຫາລືກັບ ລັດຖະບານກ່ຽວກັບ ຍຸດທະສາດການປະຕິຮູບເພື່ອຊ່ວຍສ້າງ ສະເຖຍລະພາບດ້ານເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງ, ປົກປ້ອງລາຍຈ່າຍສຳຄັນໃນຂະ

ແໜງສຶກສາ, ສາທາ ແລະ ສະຫວັດດີການ ກໍຄື ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ເພື່ອການຟື້ນຟູໃນໄລຍະຍາວ."

ໄດ້ມີການສະເໜີ 5 ຂອດການປະຕິຮູບທີ່ເປັນບຸລິມະສິດ ຄື: ຕັດການຍົກເວັ້ນພາສີອາກອນທີ່ຫຼວງຫຼາຍ ເພື່ອເພີ່ມລາຍຮັບພາກລັດ ແລະ ປົກປ້ອງລາຍຈ່າຍດ້ານສັງຄົມ; ປັບປຸງການຄຸ້ມຄອງ ການລົງທຶນຂອງພາກລັດ ແລະ ພາກລັດ-ເອກະຊົນ ກໍຄື ລັດວິສາຫະກິດ; ປັບປຸງໂຄງສ້າງໜີ້ສິນຂອງລັດ ດ້ວຍການສືບຕໍ່ການເຈລະຈາໃຫ້ສຳເລັດ; ສ້າງສະເຖຍລະພາບຂອງພາກການເງິນການທະນາຄານໃຫ້ມີຄວາມເຂັ້ມແຂງ ໂດຍນຳໃຊ້ເຄື່ອງມືທາງດ້ານນິຕິກຳ ແລະ ລະບຽບການ; ແລະ ສຸດທ້າຍແມ່ນການປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ແລະ ສົ່ງເສີມການສົ່ງອອກໂດຍຜ່ານການປະຕິຮູບບັນດາລະບຽບການຢ່າງມີປະສິດທິຜົນ.

ບົດລາຍງານໄດ້ຄາດຄະເນແນວໂນ້ມໃນໄລຍະກາງວ່າ ເສດຖະກິດຈະຄ່ອຍໆຟື້ນຕົວ ແລະ ຂັບເຄື່ອນໂດຍຂະແໜງການທ່ອງທ່ຽວ ແລະ ການສົ່ງອອກ ແຕ່ກໍຂຶ້ນກັບຄວາມສຳເລັດໃນການເຈລະຈາດ້ານ ໜີ້ສິນກັບເຈົ້າໜີ້ສອງຝ່າຍ. ນອກຈາກນັ້ນ, ແນວໂນ້ມຂອງເສດຖະກິດແມ່ນຍັງຕ້ອງປະເຊີນກັບຄວາມສ່ຽງພາຍ

ນອກຫລາຍຢ່າງ ລວມທັງນະໂຍບາຍເສດຖະກິດມະຫາພາກຂອງໂລກທີ່ເຄັ່ງຕຶງກວ່າເກົ່າ ແລະ ຜົນກະທົບທີ່ແກ່ຍາວຂອງສົງຄາມໃນ ຢູເຄຣນ.

of food and fuel. Two-thirds of households report spending less on health and education, which could undermine long-term human development.

and education, which could undermine long-term human development.

"The World Bank and other development partners are in talks with the Government regarding reform strategies to strengthen macroeconomic stability and protect essential spending in education, health, and welfare, as well as creating an enabling environment for a long-term recovery."

Five vital reforms have been proposed, including (i) cutting costly tax exemptions to raise public revenues and protect social spending; (ii) improving the governance of public and public-private investment, as well as SOEs; (iii) restructuring public debt through ongoing negotiations; (iv) strengthening financial sector stability through the implementation of legal and regulatory tools; and (v) improving the business environment and promoting exports through effective regulatory reforms.

The report also shows that the medium-term outlook assumes a gradual recovery in international tourism and exports and is also dependent on successful bilateral debt negotiations. Besides, the economic outlook is subject to significant external risks including tighter global macroeconomic policies and protracted impacts of the war in Ukraine.

II. ຜົນການດຳເນີນທຸລະກິດ ປະຈຳປີ 2022
2022 BUSINESS PERFORMANCE

ໃນໄລຍະໜຶ່ງປີທີ່ຜ່ານມາພວກເຮົາໄດ້ຮັບຜົນກະທົບຈາກອັດຕາແລກປ່ຽນເງິນກີບອ່ອນຄ່າເມື່ອທຽບໃສ່ກັບສະກຸນເງິນຕາຕ່າງປະເທດ ຄ່າຄອງຊີບຖີບຕົວຂຶ້ນສູງ ເສດຖະກິດພາຍໃນຕົກຕ່ຳ ການນຳເຂົ້າສິ່ງອອກສິນຄ້າຍັງຂາດດຸນງົບປະມານ ແລະ ມີຂ່າວຈາກພາຍນອກຕ່ຳສະພາບໜີ້ສາທາລະນະທີ່ອາດຈະບໍ່ສາມາດຊຳລະໜີ້ສິນໄດ້ ໃນເວລານັ້ນກໍ່ມີບາງປະເທດອາດຈະລົ້ມລະລາຍ ເຮັດໃຫ້ລູກຄ້າຂາດຄວາມເຊື່ອໝັ້ນຕໍ່ເງິນຝາກຕົນເອງອາດຈະບໍ່ໄດ້ຮັບຄືນ, ລູກຄ້າຈຳນວນໜຶ່ງກໍ່ໄດ້ມາຖອນເງິນຝາກກ່ອນຮອດກຳນົດ ຊຶ່ງທະນາຄານກໍພະຍາຍາມອະທິບາຍລູກຄ້າເພື່ອໃຫ້ມີຄວາມເຊື່ອໝັ້ນຕໍ່ ທະນາຄານຂອງພວກເຮົາ ແລະ ຄະນະຜູ້ບໍລິຫານໄດ້ປັບກົນລະຍຸດໃນການດຳເນີນທຸລະກິດ ຈົນໄດ້ບັນລຸເກີນແຜນການຫລາຍດ້ານ ຜົນການດຳເນີນທຸລະກິດປະຈຳປີ 2022 ຂອງທະນາຄານຮ່ວມພັດທະນາ, ເຊິ່ງໄດ້ແກ້ໄຂທີ່ໄດ້ຜົນການທົບ ໃຫ້ແກ່ລູກຄ້າ-ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ, ແລະ ກໍຍັງເປັນໂອກາດອັນດີ ສຳລັບ JDB ສາມາດບັນລຸເປົ້າໝາຍ KPI ທີ່ຕັ້ງໄວ້ໃນປີ 2022 ເຊັ່ນ: ການລະດົມແຫຼ່ງທຶນທັງສະກຸນ: ກີບ, ບາດ, ໂດລາ ແລະ ຢວນ, ປະຕິບັດໄດ້ລື່ນຄາດໝາຍທັງໝົດ 179%, ທຽບໃສ່ປີ 2021, ໃນນັ້ນ ເງິນຝາກລູກຄ້າທົ່ວໄປລື່ນຄາດໝາຍ 162% ແລະ ໄດ້ນຳໃຊ້ແຫຼ່ງທຶນປ່ອຍສິນເຊື່ອບໍ່ເກີນ 75% ຂອງແຫຼ່ງທຶນ, ສ້າງກຳໄລກ່ອນອາກອນກຳໄລເພີ່ມຂຶ້ນ 123% , ແລະ ໄດ້ມອບພັນທະອາກອນໃຫ້ກະຊວງການເງິນ ຈຳນວນ 67.291.396.098 ກີບ, ໄດ້ວາງແຜນການ KPI ປະຈຳປີ 2023 ຈະຕ້ອງຄົ້ນຄ້ວາຊອກຫາແຫຼ່ງລາຍຮັບເພີ່ມ ຈາກຜະລິດຕະພັນອື່ນໆ ທີ່ມີໃນປະຈຸບັນ. ການລະດົມແຫຼ່ງທຶນຕ້ອງຕິດພັນກັບການປ່ອຍເງິນກູ້, ຕິດພັນກັນກັບການເປີດບັນຊີເງິນຝາກຂອງລູກຄ້າຕາມແຜນ KPI ທີ່ວາງໄວ້.

In the past year, we have experienced impacts from depreciation of Lao kip against foreign currencies, a rising cost of living, a domestic economic downturn, trade deficits, and external concerns on public debt and debt servicing capabilities where, at the time, there were some other countries entering default. This has led to depositors' concerns about their deposits. Some depositors withdrew their deposits prematurely and the bank also attempted to explain to clients hoping to regain their confidence in our bank. The Management also adapted our business tactics that eventually enabled the bank to overachieve its performance targets in several fronts in 2022. These have addressed impacts on both local and international customers and business-owners and presented opportunities for JDB to realize its 2022 KPIs. For example, JBD achieved 179% for deposit mobilization in Lao kip, Thai baht, US dollar, and Chinese yuan in comparison to 2021. Specifically, general deposit clients reached 162% while loan disbursement was maintained at 75% of the total available fund. Earnings before taxes increased by 123% while tax payment reached 67,2891,396,098 kip. KPIs for 2023 have been set, and there is a need for developing more products than currently available ones to diversify revenue sources. Fund mobilization shall be linked to loan disbursements and linked to deposit account openings per KPIs.

ວຽກງານຈັດຕັ້ງ-ພະນັກງານ ຕ້ອງສ້າງຄວາມສາມັກຄີກັນເປັນປຶກແຜ່ນ, ຍົກລະດັບຄວາມຮູ້, ຄວາມສາມາດ ຂອງພະນັກງານທຸກລະດັບ ໃຫ້ເຂັ້ມແຂງ, ທະນາຄານຮ່ວມພັດທະນາ ໄດ້ມີນະ�โยบายສູງໃຫ້ແກ່ພະນັກງານຂອງຕົນ ເພື່ອແກ້ໄຂຊີວິດການເປັນຢູ່ທີ່ດີຂຶ້ນແຕ່ລະປີ.

Human Resources shall strengthen teams' solidarity and enhance staff's knowledge and capacities at all levels. Joint Development Bank provides strong remuneration packages to its employees to improve their living standards gradually.

III. ທິດທາງແຜນການ KPI ປະຈຳປີ 2023

FORWARD-LOOKING 2023 KPI

- ຄວາມສາມັກຄີຂອງພະນັກງານ ທະນາຄານຮ່ວມພັດທະນາ ຕະຫຼອດເຖິງຄະນະຜູ້ບໍລິຫານລະດັບສູງ ;
- ປະຕິບັດຂໍ້ຕົກລົງ, ລະບຽບການຕ່າງໆຢ່າງເຂັ້ມງວດ;
- ຍົກລະດັບວາມຮູ້ຄວາມສາມາດຂອງພະນັກງານ ກໍ່ສ້າງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອສ້າງພະນັກງານຂອງຕົນ ໃຫ້ບໍລິການລູກຄ້າດ້ວຍໃຈ, ໂປ່ງໃສ, ວອ່ງໄວ, ຮັກສາຈັນຍາບັນ ບໍ່ສໍ້ໂກງ, ບໍ່ຂີ້ລັກເອົາຊັບສິນເງິນຄຳ ຂອງສ່ວນລວມມາເປັນຂອງຕົນເອງ.
- ມີນະ�โยบายແກ້ໄຂຊີວິດການເປັນຢູ່ ຂອງພະນັກງານໃຫ້ດີຂຶ້ນເທື່ອລະກ້າວ.

ທະນາຄານຮ່ວມພັດທະນາບໍລິການດ້ານການເງິນແບບຄົບວົງຈອນ ເພີ່ມທາງເລືອກໃໝ່ໃຫ້ກັບລູກຄ້າຢູ່ພາຍໃນ ແລະ ຕ່າງປະເທດ ລູກຄ້າຄ້າສາມາດເລືອກໃຊ້ຜະລິດຕະພັນທີ່ເໝາະສົມ ແລະ ທັນສະໄໝ ຂອງທະນາຄານຮ່ວມພັດທະນາ, ປະຈຸບັນທະນາ ຄານຮ່ວມພັດທະນາໄດ້ພັດທະນາອົງກອນ ແລະ ຜະລິດຕະພັນທາງການເງິນໃໝ່ຢ່າງສະໝ່ຳສະເໝີ, ດ້ວຍເທັກ�โນโลยี ແລະ ຜະລິດຕະພັນອີເລັກ�โตนิกທີ່ທັນສະໄໝ ເພື່ອຮອງຮັບການບໍລິການລູກຄ້າໃນຍຸກ Digital ເປັນຕົ້ນ: ແອັບ JDB Yes Mobile Banking ທະນາຄານໃນມືຖືເປັນໜຶ່ງໃນບໍລິການທີ່ໂດດເດັ່ນ ຊ່ວຍຕອບສະໜອງການເຮັດທຸລະກຳທາງດ້ານການເງິນ ແລະ ທຸລະກິດຂອງລູກຄ້າໃຫ້ມີຄວາມສະດວກສະບາຍ, ວ່ອງໄວທັນສະໄໝ ແລະ ປອດໄພ. ລູກຄ້າສາມາດເຮັດທຸລະກຳການໂອນເງິນຂ້າມທະນາຄານພາຍໃນປະເທດ, ຊຳລະຄ່ານ້ຳ, ຄ່າໄຟຟ້າ, ຊຳລະຄ່າອິນເຕີເນັດ, ຕື່ມເງິນໂທລະສັບ, ຊຳລະຄ່າທຳນຽມທາງ, ຊຳລະພັນທະອາກອນ ແລະ ບໍລິການອື່ນໆ ຢູ່ແອັບ JDB Yes Mobile Banking. ພິເສດ ແອັບ JDB Yes Mobile Banking ຂອງພວກເຮົາ ຮອງຮັບໄດ້ຫຼາຍພາສາ ແລະ Scan QR Code ຊຳລະເງິນ ສະກຸນເງິນຢວນໄດ້. ບໍລິການ JDB Online ເປັນບໍລິການສຳລັບກຸ່ມລູກຄ້າທຸລະກິດ ແລະ ອົງການຈັດຕັ້ງ ຕ່າງໆ ຕອບສະໜອງການເຮັດທຸລະກຳທາງການເງິນ ເຮັດໃຫ້ບັນດາຫົວໜ່ວຍທຸລະກິດ ສາມາດບໍລິຫານຈັດການ ດ້ານການເງິນດ້ວຍຕົນເອງ ເຊັ່ນ: ການເບີກຈ່າຍເງິນເດືອນໃຫ້ພະນັກງານຂອງບໍລິສັດ ຫຼື ໂຮງງານ, ການຊຳລະສະສາງທັງພາຍໃນ ແລະ ຕ່າງປະເທດ, ການຊຳລະພັນທະອາກອນເຂົ້າບັນຊີງົບປະມານແຫ່ງລັດ, ການຊຳລະຄ່າສາທາລະນຸປະโภค, ຄ່າບໍລິການ ແລະ ການເຮັດທຸລະກຳອື່ນໆ, ບໍລິການຕູ້ ATM ຫຼາຍກວ່າ 200 ຕູ້ ທົ່ວປະເທດ.

- JDB Employees' solidarity and amongst senior Management officials;
- Strictly comply with Decisions and Regulations;
- Enhance staff's capacities. Support and build each other to serve with a service mindset, transparency, speed, and integrity, as well as being free embezzlement;
- Gradually improve employment's remuneration packages.

Joint Development Bank provides a comprehensive suite of financial services. Local and international customers now have a new option and can choose suitable and modern products from Joint Development Bank. Currently, Joint Development Bank consistently develops its organization and products using new technology to come up with modern e-products to accommodate digital era customers such as a mobile bankingapplication called JDB Yes that satisfies a demand for convenient, speedy, safe, and secure financial transactions and activities. Customers can make inter-bank payment transfer domestically, pay for water, pay for electricity, pay for internet, recharge phone credits, pay for road tax, pay other taxes, and engage in other services on JDB Yes application. Especially, our mobile banking application JDB Yes is multi-lingual and can accommodate payment in Chinese yuan through a QR code. JDB online services are for corporate and organizational clients who can conduct their own financial transactions such as payroll, domestic and international payments, tax payment to a National Treasury's account, utility payment, and other service charges and transactions with over 200 ATM kiosks nationwide.

JDB ເປັນໜຶ່ງໃນສະມາຊິກຂອງບໍລິສັດ LAPNET ສາມາດໃຫ້ບໍລິການຖອນເງິນສົດຂ້າມທະນາຄານໄດ້16 ທະນາຄານ, ບໍລິການຜະລິດຕະພັນ ບັດ UnionPay Debit, ບັດ UnionPay Credit Platinum, ບັດ VISA Debit, ບັດ VISA Credit Silver ແລະ ບັດVISA Credit Gold ທີ່ເປັນບັດ Chip ທັນສະໄໝ ແລະ ມີຄວາມປອດໄພສູງ ເຊິ່ງ ມີລູກຄ້ານຳໃຊ້ຢ່າງກວ້າງຂວາງ, ບໍລິການເຄື່ອງຮູດບັດ EDC ຮອງຮັບການຊຳລະສິນຄ້າ ແລະ ບໍລການດ້ວຍບັດພາຍໃນ ແລະ ບັດສາກົນ ຮອງຮັບການຊຳ ລະດ້ວຍ WechatPay ແລະ AliPay , ມີຄູ່ຮ່ວມທຸລະກິດ ແລະ ຮ້ານຄ້າທີ່ນຳໃຊ້ YesPay Lao QR ຫາຍກວ່າ 13,000 ຮ້ານຄ້າ ໃນ ຂອບເຂດທົ່ວປະເທດສາມາດຮັບຊຳລະໄດ້ທຸກທະນາຄານ.

ໃນປີ 2023 ນີ້ JDBຈະສູ້ຊົນສ້າງຜົນກຳໄລໂດຍປະ ຕິບັດຕາມແຜນ KPI ໃຫ້ບັນລຸເປົ້າໝາຍທີ່ວາງໄວ້ເພື່ອປະກອບ ສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດໃຫ້ມີຄວາມຈະ ເລີນຮຸ່ງເຮືອງໂດຍໄປຕາມຄຳຂວັນຂອງທະນາຄານຮ່ວມພັດທະນາ

JDB is a member of LAPNET which enables inter-bank cash withdrawals amongst 16 banks. We offer card products such as UnionPay Debit card, UnionPay Credit Platinum card, VISA Debit card, VISA Credit Silver card, and VISA Credit Gold card that are modern and highly secure chip cards widely used by customers. We have EDC carding machines that can accommodate payments for goods and services using domestic and international cards, WeChat Pay, and AliPay. We have over 13,000 partner businesses and vendors for our YesPay QR Code that supports payments from all banks.

In 2023, JDB will strive to achieve profits per KPIs and contribute to national development per our motto below:

JDB

ທະນາຄານຮ່ວມພັດທະນາ

ໜ່ວຍບໍລິການ ທະນາຄານຮ່ວມພັດທະນາ

“ເຕີບໃຫຍ່ໄປພ້ອມກັນ”

“BLOOMING TOGETHER”

LINE QR code

Website www.jdbbank.com.la

jdbbankofficial

Hotline 1499

JDB
ທະນາຄານຮ່ວມພັດທະນາ

ວຽກງານເຄື່ອນໄຫວ ປະຈຳປີ 2022

ຮັບໂລລາງວັນ ທຸລະກິດຊັ້ນນຳດີເດັ່ນ

JDB
ທະນາຄານຮ່ວມພັດທະນາ

ວຽກງານເຄື່ອນໄຫວ ປະຈຳປີ 2022

ຮັບທຽນ 65 ປີ ສູນກາງຊາວໜຸ່ມ

ຮັບໂລລາງວັນ ກະຊວງການເງິນ

ວຽກງານເຄື່ອນໄຫວ ປະຈຳປີ 2022

ພິທີມອບພັນທະອາກອນ ປະຈຳປີ 2022 ໃຫ້ກະຊວງການເງິນ

ພິທີເປີດໂຕບໍລິການຮັບຊຳລະຄ່າທຳນຽມທາງ

ກອງປະຊຸມທາງໄກ ກັບໜ່ວຍບໍລິການທົ່ວປະເທດ

JDB
ທະນາຄານຮ່ວມພັດທະນາ

ວຽກງານເຄື່ອນໄຫວ ປະຈຳປີ 2022

ຄະນະນຳທະນາຄານແຫ່ງສປປ ລາວ ມາຢ້ຽມຢາມ

ພິທີມອບລາງວັນ ໃຫ້ຜູ້ໂຊກດີ ທີ່ຝາກປະຈຳ ນຳທະນາຄານຮ່ວມພັດທະນາ

ວຽກງານຊ່ວຍເຫຼືອສັງຄົມ

ມອບເງິນອຸປະຖໍາ ບຸນຊ່ວງເຮືອທ່າວັດຈັນ

ມອບເງິນສະໜັບສະໜູນງານປະກວດນາງສັງຂານທີ່ຫຼວງພະບາງ

ມອບຮັບໂຮງຮຽນປະຖົມ ເມືອງເຊໂປນ ແຂວງສະຫວັນນະເຂດ

ວຽກງານຊ່ວຍເຫຼືອສັງຄົມ

ມອບນ້ຳດື່ມ ໃຫ້ສະມາຄົມນັກຮົບເກົ່າ

ກິດຈະກຳເຕະບານຮ່ວມກັບ BOL

ສະໜັບສະໜຸນ ສະຫະພັນເຕະບານ ນະຄອນຫຼວງ

ສະໜັບສະໜູນງານຊຽງຂວາງເກມ

Financial Highlight

	2015	2016	2017	2018	2019	2020	2021	2022
Asset	1,613,295	2,356,382	2,889,413	3,632,186	5,018,043	7,679,049	10,970,251	17,649,864
Deposit to customers	1,125,293	1,873,694	2,356,742	2,925,232	4,240,095	5,945,355	8,727,580	14,140,149
Loan	782,067	1,272,882	1,913,425	2,190,461	3,314,709	4,595,516	7,566,039	11,977,808



	2015	2016	2017	2018	2019	2020	2021	2022
Revenues	162,523	230,949	308,455	278,890	356,325	505,037	726,306	1,308,655
Expenses	159,370	225,784	302,177	271,052	316,663	419,353	592,116	1,027,226
Profit	3,143	5,166	6,278	7,838	39,662	85,684	134,190	281,429



ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ

ເຖິງ: ເຈົ້າຂອງທະນາຄານ ຮ່ວມພັດທະນາ ຈຳກັດ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ທະນາຄານ ຮ່ວມພັດທະນາ ຈຳກັດ ("ທະນາຄານ") ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2022 ໄດ້ສະແດງສະຖານະທາງການເງິນຂອງທະນາຄານ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ນະ�โยบายການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ເອກະສານລາຍງານການເງິນທີ່ກວດສອບ

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບລາຍງານຜົນການດຳເນີນງານ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2022
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs) ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເຫມາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກ ທະນາຄານ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ. ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ ແລະ ຂໍ້ຫ້າມໃນການແຈກຢາຍ ແລະ ການນຳໃຊ້ບົດລາຍງານການເງິນ.

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ. ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ເອກະສານລາຍງານການເງິນນີ້ໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງທະນາຄານທີ່ໄດ້ອະທິບາຍໄວ້ໃນບົດຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ. ເຊິ່ງເອກະສານລາຍງານການເງິນອາດບໍ່ເໝາະສົມກັບວັດຖຸປະສົງອື່ນ.

ບົດລາຍງານຂອງພວກເຮົາມີໄວ້ສຳລັບທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ. ບໍ່ຄວນແຈກຢາຍໃຫ້ບຸກຄົນອື່ນ ຫຼື ນຳໃຊ້ໂດຍບຸກຄົນອື່ນທີ່ບໍ່ແມ່ນທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ. ຄວາມເຫັນຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິ້ງນີ້.

ຄວາມຮັບຜິດຊອບຂອງຄະນະຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຄະນະຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ລະບຽບການ ການບັນຊີທີ່ກ່ຽວຂ້ອງ ແລະ ແຈ້ງການ ຂອງ ທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ. ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງທະນາຄານໃນການດຳເນີນງານຢ່າງຕໍ່ເນື່ອງ. ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ. ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ. ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ. ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ. ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ. ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ. ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະ�โยบายການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼື ບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ ເຫດການ ຫຼື ສະພາບຕົວຈິງໃນອນາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຜູ້ບໍລິຫານ ກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫว่างການກວດສອບຂອງພວກເຮົາ.

ບໍລິສັດ ພຣາຍສ້ວເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດຜູ້ດຽວ

ການ ເງິນ ກະຊວງ ບໍລິສັດ ພຣາຍສ້ວເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດຜູ້ດຽວ Price Waterhouse Coopers (Lao) Sole Company Limited ນະຄອນ ຫຼວງ ວຽງຈັນ

ໂດຍ: ອະພິສິດ ທ່ຽງຕົງພົນໄຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 25 ເມສາ 2023

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

		ບົດ ອະທິບາຍ	2022 ກີບ	2021 ກີບ
A.	**ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ**			
1	ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	4	942.752.964.851	524.715.359.547
2	ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	4	(656.205.141.486)	(385.379.538.559)
I.	**ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ**		**286.547.823.365**	**139.335.820.988**
3	ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	5	204.449.374.336	156.402.282.832
4	ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	5	(36.695.384.932)	(15.388.848.120)
5	(ຂາດທຶນ)/ກຳໄລສຸດທິ ຈາກການລົງທຶນໃນຫຼັກຊັບ	6	16.296.498.384	7.947.669.420
6	ກຳໄລສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ	9	134.784.608.373	32.134.036.671
II.	**ລາຍຮັບສຸດທິຈາກການດຳເນີນງານ**		**605.382.919.526**	**320.430.961.791**
B	**ລາຍຮັບ ແລະ ລາຍຈ່າຍອື່ນໆ**			
7	ລາຍຮັບອື່ນໆຈາກການດຳເນີນງານ	7	10.371.889.344	5.106.808.165
